# ກອງປະຊຸມປະຈຳປີຄະນະບໍລິຫານ SEACEN-EXCO ຄັ້ງທີ 23




ໃນວັນທີ 30 ສິງຫາ 2024, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ), ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີຄະນະບໍລິຫານ SEACEN-EXCO ຄັ້ງທີ 23 (23rd SEACEN EXCO Meeting) ໃນຮູບແບບອອນລາຍ.

ກອງປະຊຸມປະຈຳປີຄະນະບໍລິຫານ SEACEN-EXCO ຄັ້ງທີ 23 ເປັນກອງປະຊຸມລະດັບຮອງຜູ້ວ່າການທະນາຄານກາງຂອງສະມາຊິກ SEACEN ທີ່ຈັດຂຶ້ນໃນໄລຍະໄຕມາດທີ 3 ຂອງທຸກປີ ເພື່ອເປັນເວທີປຶກສາຫາລື ແລະ ປະກອບຄຳເຫັນແລກປ່ຽນ ເປັນຕົ້ນແມ່ນ ການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຂອງສູນ SEACEN ໃນໄລຍະຜ່ານມາ, ບັນດາແຜນກິດຈະກຳຕ່າງໆ, ແຜນງົບປະມານ, ໂຄງການສຳມະນາ-ຝຶກອົບຮົມ, ການຄົ້ນຄວ້າ ແລະ ແຜນຍຸດທະສາດ ສຳລັບປີ 2025, ພ້ອມທັງເປັນການຍາດແຍ່ງທາງດ້ານວິຊາການ ໂດຍສະເພາະບັນດາຫົວຂໍ້ຝຶກອົບຮົມ-ສຳມະນາຕ່າງໆໃຫ້ພະນັກງານໃນການເຂົ້າຮ່ວມ. ສຳລັບຜົນກອງປະຊຸມດັ່ງກ່າວ ແມ່ນເພື່ອກະ ກຽມລາຍງານ ແລະ ສະເໜີໃນກອງປະຊຸມສະພາບໍລິຫານຜູ້ວ່າການທະນາຄານກາງ SEACEN-BOG ຮັບຮອງໃນເດືອນທັນວາ 2024.



ກອງປະຊຸມດັ່ງກ່າວ ແມ່ນໄດ້ດຳເນີນເປັນເວລາເຄິ່ງວັນ ດ້ວຍບັນຍາກາດອັນຟົດຟື້ນ, ຜູ້ເຂົ້າຮ່ວມກໍ່ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນ ຢ່າງກົງໄປກົງມາ ເຮັດໃຫ້ກອງປະຊຸມ ສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.

ຂ່າວ: ກົມຮ່ວມມືສາກົນ

ພາບ: ສົມພິດ ທຳມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*